**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ສປປລາວ
ຫ້ອງການ ຄຊກລ

ເລກທີ 878/ຫຄຊກລ.ຄພ

ນະຄອນຫລວງວຽງຈັນ, ວັນທີ 06 ຕ.ລ 2023.

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ

**ເລື່ອງ:** ຜົນການກວດກາ ແລະ ຄວບຄຸມຄຸນນະພາບ ຂອງ ອົງການ ຊ່ວຍເຫຼືອລ້າຂອງປະຊາຊົນ ນອກແວ (NPA) ປະຈຳແຂວງເຊກອງ.

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການ ຄຊກລ ສະບັບເລກທີ 728/ຫຄຊກລ, ວັນທີ 31 ສິງຫາ 2023 ວ່າດ້ວຍການແຕ່ງຕັ້ງໜ່ວຍງານຄຸ້ມຄອງຄຸນນະພາບ ລົງຢ້ຽມຢາມ ຕິດຕາມການປະຕິບັດງານ ອົງການເອັນພີເອ (NPA) ປະຈຳແຂວງເຊກອງ ສະຫ່ວາງວັນທີ 06 ຫາ 14 ກັນຍາ 2023, ອະນຸມັດໃຫ້ ອົງການ ຊ່ວຍເຫຼືອລ້າຂອງປະຊາຊົນນອກແວ ຈັດຕັ້ງປະຕິບັດກິດຈະກຳເກັບກູ້ ລບຕ ໂດຍມີບົດບັນທຶກຄວາມເຂົ້າໃຈ (MOU) ທີ່ເຊັນຮ່ວມກັບລັດຖະບານ ສປປ ລາວ, ລົງວັນທີ 13 /07/ 2023 ຈົນເຖິງວັນທີ 31 /10/2024 ໂຄງການສຳຫຼວດ ແລະ ເກັບກູ້ ລບຕ ໄລຍະ VI ປະກອບມີ 4 ເມືອງຄື ເມືອງລະມາມ, ກະລຶມ, ທ່າແຕງ, ແລະ ເມືອງດາກຈຶງ ໄດ້ເລີ່ມເຄື່ອນໄຫວວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງຕົວຈິງໃນເດືອນ ພຶດສະພາ ປີ 2023 ເປັນຕົ້ນມາ, ນຳໃຊ້ມາດຕະຖານການປະຕິບັດງານ (SOP) ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ ທີ່ກຳນົດເປັນບ່ອນອີງ, ເພາະສະນັ້ນ ທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ, ພະນັກງານວິຊາການ ຄຄກລ ແຂວງເຊກອງ ພ້ອມກັບພະນັກງານວິຊາການອົງການເອັນພີເອ (NPA) ເຂົ້າຮ່ວມໃນການລົງຕິດຕາມ ກວດກາ ແລະ ຄວບຄຸມຄຸນນະພາບ ການປະຕິບັດງານເກັບກູ້ລະເບີດຂອງອົງການເອັນພີເອ (NPA).

- ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:
  1. ທ່ານ ບຸນນານ ລັດຕະນະວົງ, ໜ່ວຍງານຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
  2. ທ່ານ ພອງສອນ ໄຊສົມບັດ, ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
  3. ທ່ານ ແພງສີ ດວງພັນໄຊ, ແພດ/ຂອງທີມງານກວດກາຄຸນນະພາບ ຫ້ອງການ ຄຊກລ;
  4. ທ່ານ ໄວລຸ້ນ ແກ້ວົງສັກ, ວິຊາການຄຸ້ມຄອງຄຸນນະພາບ/ຂັບລົດ ຫ້ອງການ ຄຊກລ;
  5. ທ່ານ ແສງສຸລີ ວຽງຄຳສອນ, ວິຊາການກວດກາຄຸນນະພາບ ຫ້ອງການ ຄຊກລ;
  6. ທ່ານ ນາງ ວົງຕາວັນ ພູພຽງເດືອນ, ວິຊາການ ຫ້ອງການ ຄຄກລ ປະຈຳ ແຂວງເຊກອງ.
- **ພາກສ່ວນອົງການ (NPA).**
  1. ທ່ານ ນາງ ຈາລຸນີ ອິນສຸດທາ, ຜູ້ປະສານງານ ອົງການເອັນພີເອ (NPA) ປະຈຳ ແຂວງເຊກອງ;
  2. ທ່ານ ເງິນ ວິມົນລັດ, ວິຊາການ ຊ່ວຍວຽກປະສານງານ ອົງການເອັນພີເອ (NPA) ປະຈຳ ແຂວງເຊກອງ;
  3. ທ່ານ ນາງ ສາຍຕາ ແກ້ວອຸ່ນຫຼ້າ ຫົວໜ້າແພດ.

### 1. ຈຸດປະສົງໃນການຕິດຕາມກວດກາ

ເພື່ອຕິດຕາມກວດກາ ແລະ ຄວບຄຸມຄຸນນະພາບ ການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ສັງເກດນັກວິຊາການ, ການບໍລິຫານຄຸ້ມຄອງບັນຊາການ, ທາງດ້ານເຕັກນິກການປະຕິບັດສຳຫຼວດບໍ່

ແມ່ນວິຊາການ, ສຳຫຼວດດ້ານວິຊາການ, ກວດກູ້, ທຳລາຍ ລບຕ ແລະ ຄວບຄຸມຄຸນນະພາບເນື້ອທີ່ກວດກູ້ສຳເລັດແລ້ວ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ ລະບົບເປັນເອກະພາບໃນມາດຕະຖານອັນດຽວກັນ.

**2. ຈຳນວນພະນັກງານ**

ອົງການເອັນພີເອ (NPA) ເຄື່ອນໄຫວປະຕິບັດງານປັດຈຸບັນຢູ່ແຂວງເຊກອງ ປະກອບມີພະນັກງານທັງໝົດຈຳນວນ 197 ຄົນ, ຍິງຈຳນວນ 53 ຄົນ, ຫົວໜ້າທີມ 08 ຄົນ, ວິຊາການທັງໝົດຜ່ານການຝຶກອົບຮົມໃຫ້ໂດຍອົງການເອັນພີເອ (NPA).

| ລາຍລະອຽດ/Department | ທີມ/Team | ຈຳນວນພະນັກງານ/Total | ຜູ້ຍິງ/Female |
|---|---|---|---|
| ພະນັກງານປະຈຳເຊກອງ/NPA SEK Staff | | | |
| ທີມກວດກູ້/BAC | 8 | 120 | 43 |
| ທີມສຳຫຼວດ/ST | 2 | 12 | 4 |
| ທີມໂຄສະນາ/EORE/CL | 1 | 3 | 1 |
| ພະນັກງານຕ່າງປະເທດ/ International Staff | | 1 | 0 |
| ພະນັກງານຫ້ອງການ/SEK staff | | 10 | 3 |
| ຖາງປ່າ/Cutter | 8 | 51 | 2 |
| **ຈຳນວນພະນັກງານພາກສະໜາມທັງໝົດ/ Total field staffs** | **19** | 197 | 53 |

**3. ເຄື່ອນໄຫວປະຕິບັດງານເກັບກູ້ ລບຕ**

ອົງການເອັນພີເອ (NPA) ປະຈຳແຂວງເຊກອງ ເລີ່ມປະຕິບັດງານການກວດກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງໃນປີ 2023ຕາມບົດບັນທຶກຄວາມເຂົ້າໃຈ ແລະ ບັນດາເປົ້າໝາຍແຜນປະຕິບັດງານສຳຫຼວດ ແລະ ກວດກູ້ ລບຕ ທີ່ກຳນົດຄື: ເມືອງ ລະມາມ, ເມືອງທ່າແຕງ, ເມືອງກະລຶມ ແລະ ເມືອງດາກຈຶງ. ອົງການເອັນພີເອ (NPA) ແຂວງເຊກອງ ມີພຽງແຕ່ປະຕິບັດວຽກງານກວດກູ້ ແລະ ການທຳລາຍ ລບຕ ໄດ້ເລີ່ມເຄື່ອນໄຫວໃນເດືອນ ພຶດສະພາ ຫາ ເດືອນ ກໍລະກົດ 2023 ເປັນຕົ້ນມາ.

ຄາດຄະເນຕົວເລກຜູ້ໄດ້ຮັບຜົນປະໂຫຍດທາງກົງ ສຳລັບ 04 ຕົວເມືອງ ແຂວງເຊກອງ

- ຜູ້ໄດ້ຮັບຜົນປະໂຫຍດ: ຊາຍໃຫ່ຍຈຳນວນ 1.498 ຄົນ, ຍິງໃຫ່ຍຈຳນວນ 1.488 ຄົນ, ເດັກຊາຍຈຳນວນ 1.484 ຄົນ, ເດັກຍິງຈຳນວນ 1.623 ຄົນ, **ລວມທັງໝົດ ຈຳນວນ 6.093 ຄົນ.**

ຕົວເລກດັ່ງກ່າວນີ້ຖືກຄາດຄະເນຕາມສະຖິຕິຕົວເລກຂອງຜູ້ໄດ້ຮັບຜົນປະໂຫຍດຂອງການກວດກູ້ທີ່ອົງການເອັນພີເອ ໄດ້ດຳເນີນການຕັ້ງແຕ່ວັນທີ 1 ມັງກອນ 2022 ເຖິງ 31 ທັນວາ 2022.

ອົງການເອັນພີເອ (NPA) ແຂວງເຊກອງ ຈະດຳເນີນການກວດກູ້ ພື້ນທີ່ ຈຳນວນ 26 ບ້ານ ຂອງ 04 ຕົວເມືອງ , ລວມ 80 ພື້ນທີ່ຢືນຢັນວ່າອັນຕະລາຍ (CHA): 5,940,407 ຕາແມັດ ຕົວເລກໃນ (MOU) 13 /07/ 2023).

**ຜົນການເຄືອນໄຫວ ແຕ່ເດືອນ ມັງກອນ ຫາ ກໍລະກົດ ປີ 2023 ຂອງ 04 ເມືອງ:**

3.1 ໜ້າວຽກສຳຫຼວດດ້ານຫຼັກວິຊາການ (TS);

3.1.1 ເນື້ອທີ່ສຳຫຼວດທັງໝົດ 592,500 ຕາແມັດ

- ເນື້ອທີ່ທີ່ຖືກຢັ້ງຢືນວ່າມີຜົນກະທົບ (CHA): 185,944 ຕາແມັດ ຈຳນວນ 02 ພື້ນທີ່
- ລະເບີດບົມບີ ທີ່ພົບ 21 ໜ່ວຍ
- ລະເບີດອື່ນໆ ທີ່ພົບ 06 ໜ່ວຍ

3.2. ໜ້າວຽກກວດກູ້ໃນພື້ນທີ່ (CHA);

3.2.1 ເນື້ອທີ່ກວດກູ້ໄດ້ ທັງໝົດ 1,264, 702 ຕາແມັດ

- ລະເບີດບົມບີ ທີ່ພົບ 1,976 ໜ່ວຍ
- ໂບມໃຫຍ່ ທີ່ພົບ 02 ໜ່ວຍ
- ລະເບີດອື່ງ ທີ່ພົບ 294 ໜ່ວຍ

3.3 ໜ້າວຽກທຳລາຍລະເບີດ;

3.3.1 ລະເບີດທີ່ໄດ້ທຳລາຍ

- ລະເບີດບົມບີ 2,463 ໜ່ວຍ
- ໂບມໃຫ່ຍ 01 ໜ່ວຍ (ອີກໜ່ວຍໜຶ່ງແມ່ນລໍຖ້າການທຳລາຍ ສາຍເຫດຍ້ອນສະພາບເສັ້ນທາງຫຸ້ຍງຍາກເຂົ້າໄປບໍ່ໄດ້ໃນຊ່ວງນີ້ ແຕ່ທາງຊຽວຊານກໍ່ໄດ້ເອົາໄວ້ຢູ່ບ່ອນປອດໄພແລ້ວ).
- ລະເບີດອື່ນໆລະເບີດອື່ນໆ 365 ໜ່ວຍ

4. **ວຽກງານເກັບກູ້ ລບຕ:** ລົງຢ້ຽມຢາມສະໜາມບ້ານດາກຣັນ ເມືອງດາກຈຶງ ແຂວງ ເຊກອງ ທີມງານກວດກູ້ລະເບີດ T12 T14, ພື້ນທີ່ (CHA): 44 ເນື້ອທີ່ 1,5301 ຕາແມັດ ເປັນບຸລິມະສິດຂອງບ້ານທີ່ຢູ່ໃນແຜນ, ເລີ່ມກວດກູ້ໃນວັນທີ 07 ເດືອນ ກັນຍາ 2023 ຄາດກະຈະສຳເລັດວັນທີ່ 12 ເດືອນກັນຍາ 2023 ໃນເນື້ອທີ່ທັງໝົດຈຳນວນ 15,301 ຕາແມັດ ຂອງເນື້ອທີ່ (CHA), ໃນແຕ່ລະວັນ ກວດກູ້ໄດ້ 1,740 ຕາແມັດ ຕໍ່ 07 ເຄື່ອງກວດ ເທົ່າກັບ 248.5 ຕາແມັດ ຕໍ່ມື້ຕໍ່ຄົນ, ນຳໃຊ້ເຄື່ອງກວດ Vallon VMX 1-3. ຜູ້ໄດ້ຮັບຜົນປະໂຫຍດຈຳນວນ 02 ຄອບຄົວ, ລວມ 10 ຄົນ,ຜູ້ໃຫຍ່ 04 ຄົນ ຍິງໃຫ່ຍ 2 ຄົນ, ເດັກນ້ອຍ 06 ຄົນ ເດັກຍິງນ້ອຍ 2 ຄົນ.

3. **ຄວບຄຸມຄຸນນະພາບ:** ທີມງານຄວບຄຸມຄຸນນະພາບ ຂອງຫ້ອງການ ຄຊກລ ລົງກວດກາຄວບຄຸມຄຸນນະພາບ 2% ໃນເນື້ອທີ່ກວດກູ້ສຳເລັດແລ້ວໃນ 3 ຕົວເມືອງຄື: ເມືອງລະມາມ, ເມືອງດາກຈຶງ ແລະ ເມືອງ ທ່າແຕ່ງ ຈຳນວນ 10 ສະໜາມ ເຫັນວ່າ ບໍ່ພົບລະເບີດຕົກຄ້າງ ແລະ ຊິ້ນສ່ວນຂອງລະເບີດທີ່ໃຫຍ່ກວ່າເຄິ່ງບົມບີ 26 (BLU $26^{1/2}$), ລາຍລະອຽດມີດັ່ງລຸ່ມນີ້:

1) ບ້ານ ທ່າແຕ່ງໃຕ້ Tak ID: NPA_AC_2022_1504057_013 ເນື້ອທີ່ກວດກູ້ແລ້ວຈຳນວນ 26,195 $m^2$, Area QC _25x25 x 1Box = 625 $m^2$ = 2,38%
2) ບ້ານ ຈະກຳໃຫ່ຍ Tak ID: NRA_AC_2022_1504018_001 ເນື້ອທີ່ກວດກູ້ແລ້ວຈຳນວນ 125,960 $m^2$, Area QC_35 x 40 x 2Box = 2,800 $m^2$ = 2,22%
3) ບ້ານ ດາກບຣາງ Tak ID: NRA_AC_2023_1503053_005 ເນື້ອທີ່ກວດກູ້ແລ້ວຈຳນວນ 121,060 $m^2$, Area QC_35 x 40 x 2Box = 2,800 $m^2$ = 2,31%
4) ບ້ານ ດາກເຕຼີບ Tak ID: NRA_AC_2022_1503017_007 ເນື້ອທີ່ກວດກູ້ແລ້ວຈຳນວນ 69,500 $m^2$, Area QC_25 x 30 x 2Box = 1,500 $m^2$ = 2,15%
5) ບ້ານ ດາກເຕຼີບ Tak ID: NRA_AC_2022_1503017_008 ເນື້ອທີ່ກວດກູ້ແລ້ວຈຳນວນ 121,655 $m^2$, Area QC_35 x 40 x 2Box = 2,800 $m^2$ = 2,21%
6) ບ້ານ ດາກຕຼຽມ Tak ID: NRA_AC_2023_1503058_024A ເນື້ອທີ່ກວດກູ້ແລ້ວຈຳນວນ 21,295 $m^2$, Area QC_20 x 40 x 1Box = 800 $m^2$ = 3,75%ບ້ານ ດາກຕຼຽມ Tak ID: NRA_AC_2023_1503058_024B ເນື້ອທີ່ກວດກູ້ແລ້ວຈຳນວນ 10,290 $m^2$, Area QC_25 x 25 x 1Box = 625 $m^2$= 6,07%
7) ບ້ານ ດາກຣັນ Tak ID: NRA_AC_2019_1503131_003 ເນື້ອທີ່ກວດກູ້ແລ້ວຈຳນວນ 102,622 $m^2$, Area QC_30 x 40 x 2Box = 2,400 $m^2$ = 2,33%
8) ບ້ານ ດາກຣັນ Tak ID: NRA_AC_2022_1503131_012 ເນື້ອທີ່ກວດກູ້ແລ້ວຈຳນວນ 57,000 $m^2$, Area QC_30 x 40 x 1Box = 1,200 $m^2$ = 2,10%

9) ບ້ານ ນາເວີ Tak ID: NRA_AC_2023_1501018_001 ເນື້ອທີ່ກວດກູ້ແລ້ວຈຳນວນ 148,020 m², Area QC_ 20 x 50 x 3Box = 3,000 m² = 2,02%

- ລວມເນື້ອທີ່ກວດກູ້ທັງໝົດ AC ຈຳນວນ 803,597 m²
- ລວມເນື້ອທີ່ກວດກູ້ທັງໝົດ QC ຈຳນວນ 18,550 m² = 2,30%

II. **ຜົນຂອງການກວດກາ**

ຜ່ານການລົງປະຕິບັດງານຕິດຕາມ ແລະ ຄວບຄຸມຄຸນນະພາບ (QC) ຈຳນວນ 10 ສະໜາມກວດກູ້ສຳເລັດແລ້ວ ຂອງ ອົງການຊ່ວຍເຫຼືອລ້າຂອງປະຊາຊົນນອກແວ ປະຕິບັດມາດຕະຖານສາມາດສະຫຼຸບລວມໄດ້ດັ່ງນີ້:

**1)** ກວດກາ ຄວບຄຸມຄຸນນະພາບພາຍໃນ ຂອງ ອົງການ (NPA) ປະຕິບັດຕາມ (SOP) ແມ່ນດັ່ງນີ້ ບົດທີ່ 06- ຂໍ້ 6.2 ຫົວໜ້າຈຸປະຕິບັດ 10% ໃນເລັ້ນທີ່ສຳເລັດແລ້ວທັນທີ. ຢູ່ບົດທີ່ 04- ຂໍ້ 11 ຫົວໜ້າທີມ ແລະ ຫົວໜ້າຈຸປະຕິບັດຢ່າງໜອຍ 30% ຂອງເນື້ອທີ່ກວດກູ້ໃນແຕ່ລະວັນ ເພື່ອໃຫ້ປອດລະເບີດບໍ່ທັນແຕກຕົກຄ້າງ.

**2)** ຜ່ານການລົງຄວບຄຸມຄຸນນະພາບ ທັງ 10 ສະໜາມເຫັນວ່າ ບໍ່ພົບລະເບີດຕົກຄ້າງ ແລະ ຊິ້ນສ່ວນຂອງລະເບີດທີ່ໃຫຍ່ກວ່າເຄິ່ງບົມບີ 26 (BLU 26$^{1/2}$).

**3)** ອົງການ (NPA) ແຂວງເຊກອງ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ ແບບຟອມຄວບຄຸ້ມຄຸນນະພາບພາຍໃນ, ແບບຟອມບັນທຶກທົດສອບເຄື່ອງກວດປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈງໄດ້, ສ້າງແຜນຮອງຮັບອຸປະຕິເຫດ, ໝວດເລືອດຂອງພະນັກງານ ແລະ ເອກະສານອື່ນໆ ເຫັນວ່າຄົບຖ້ວນຕາມມາດຕະ ຖານການປະຕິບັດງານທີ່ໄດ້ກຳນົດໄວ້.

**ຂໍ້ຄົງຄ້າງ**

- ວິທີການປິ່ນປົວຟົດສະຟູ່ຂາວ ຍັງບໍ່ລະອຽດ ຍ້ອນບໍ່ອະນາໄມບາດແຜ ກ່ອນການພັນບາດແຜ.
- ວິທີການຫ້າມເລືອດ ແລະ ວິທີການພັນບາດແຜ ບໍ່ອະນາໄມບາດແຜ ກ່ອນພັນບາດແຜ.
- ສາງເກັບມ້ຽນອຸກອນການແພດ ແລະ ຢາ ຕ້ອງມີຊ່ອງລະບາຍອາກາດ.

ສະນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ ຄຊກລ** | **ໜ່ວຍງານຄຸ້ມຄອງຄຸນນະພາບ**

ຫ້ອງການ ຄຊກລ

ໂຈມແຍງ ແພງທອງສະຫວັດ

ສົມສັກ.

**ບ່ອນນຳສົ່ງ:**

- ຄຄກລ ແຂວງເຊກອງ 'ເພື່ອລາຍງານ'
- ອົງການ NPA ນະຄອນຫຼວງວຽງຈັນ ແລະ NPA ປະຈຳແຂວງຈຳປາສັກ, ເຊກອງ 'ປະຕິບັດ"
- ຫ້ອງການ ຄຊກລ ເກັບມ້ຽນ